ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 72 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 01 ເມສາ 2020

## ແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ.
**ເລື່ອງ:** ຂ່າວປອມກ່ຽວກັບ ການອອກນຳໃຊ້ທະນະບັດໃບ 500.000 ກີບ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນປະຈຸບັນໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງ ສ້າງຄວາມປັ່ນປ່ວນ ແລະ ຄວາມບໍ່ສະຫງົບໃນສັງຄົມ, ໂດຍສະເພາະໃນສັງຄົມອອນລາຍ (Face book) ແລະ ອື່ນໆ ດ້ວຍການນຳເອົາທະນະບັດປະເພດໃບ 100.000 ກີບ ທີ່ນຳໃຊ້ໃນຂອດຈໍລະຈອນ ປະຈຸບັນມາຕັດຕໍ່ເຮັດເປັນທະນະບັດປະເພດໃບ 500.000 ກີບ ໂດຍນຳເອົາຮູບພາບປະທານ ສຸພານຸວົງ ແລະ ດັດແປງຕົວເລກມູນຄ່າ 100.000 ກີບ ເປັນຕົວເລກມູນຄ່າ 500.000 ກີບ ໃສ່ໃນໃບທະນະບັດດັ່ງກ່າວ, ສ້າງຂ່າວທີ່ບໍ່ມີມູນຄວາມຈິງໃນສັງຄົມອອນລາຍ ວ່າຈະມີການອອກນຳໃຊ້;

ຕໍ່ກັບບັນຫາດັ່ງກ່າວ ທະນາຄານແຫ່ງ ສປປ ລາວ ຂໍຢັ້ງຢືນວ່າ: ບໍ່ມີມູນຄວາມຈິງ **ເປັນຂ່າວປອມ**, ສະນັ້ນຈຶ່ງຮຽກຮ້ອງໃຫ້ສັງຄົມຈົ່ງມີສະຕິລະວັງຕົວໃນການຕິດຕາມຂ່າວ ເພື່ອບໍ່ໃຫ້ຕົກເປັນເຄື່ອງມືຂອງກຸ່ມຄົນບໍ່ຫວັງດີ ສ້າງຄວາມປັ່ນປ່ວນໃນສັງຄົມ, ໂຄງປະກອບປະເພດໃບທະນະບັດຂອງ ສປປ ລາວ ທີ່ມີມູນຄ່າສູງສຸດ ໃນປະຈຸບັນແມ່ນໃບ 100.000 ກີບເທົ່ານັ້ນ;

ສຳລັບກຸ່ມຄົນທີ່ບໍ່ດີສ້າງຂ່າວປອມຂຶ້ນມາປັ່ນປ່ວນໃນສັງຄົມນັ້ນ, ທະນາຄານແຫ່ງ ສປປ ລາວ ຈະໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປະຕິບັດມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ.

**ປະເພດທະນະບັດທີ່ມີມູນຄ່າສູງສຸດໃນປະຈຸບັນ**




**ແບບທະນະບັດທີ່ເຫັນຈາກຂ່າວປອມ**




ຖ້າພົບເຫັນ ຫຼື ຮູ້ຂໍ້ມູນແຫຼ່ງທີ່ມາດັ່ງກ່າວກະລຸນາແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດ ຫຼື ທະນາຄານແຫ່ງ ສປປ ລາວ (ກົມພິມຈຳໜ່າຍ) 021 213119, 021 243615, ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ແລະ ທະນາຄານທຸລະກິດທຸກແຫ່ງໃນຂອບເຂດທົ່ວປະເທດ;

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈົ່ງມີສະຕິລະວັງຕົວບໍ່ຫຼົງເຊື່ອຕໍ່ການໂຄສະນາ ຊວນເຊື່ອໃນຮູບແບບຕ່າງໆຂອງກຸ່ມຄົນບໍ່ດີ ທີ່ຈະສ້າງຄວາມປັ່ນປ່ວນ ຢູ່ໃນສັງຄົມ.

**ຫົວໜ້າຫ້ອງການ**

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ